United Nations Development Programme

# PRESS RELEASE

Empowered lives.
Resilient nations.

# ລົງທຶນໃສ່ການທ່ອງທ່ຽວແບບອະນຸລັກທຳມະຊາດ ຢູ່ແຂວງ ສະຫວັນນະເຂດ ເພື່ອສົ່ງເສີມການພັດທະນາແບບຍືນຍົງ ແລະ ຫຼຸດຜ່ອນຄວາມທຸກຍາກ

*ຜູ້ເຂົ້າຮ່ວມຫຼາຍກວ່າ 150 ທ່ານໄດ້ເຂົ້າຮ່ວມການຢ້ຽມຢາມພາກສະໜາມ ແລະ ກອງປະຊຸມກ່ຽວກັບ ການລົງທຶນໃນຂະແໜງການທ່ອງທ່ຽວແບບອະນຸລັກທຳມະຊາດ ຢູ່ປ່າໂຄກ ທີ່ຢູ່ພາກໃຕ້ຂອງ ສປປ ລາວ ໃນລະຫວ່າງກອງປະຊຸມລະດົມແນວຄິດເພື່ອດຶງດູດ ແລະ ສົ່ງເສີມການທ່ອງທ່ຽວແບບອະນຸລັກທຳມະຊາດ ຢູ່ແຂວງສະຫວັນນະເຂດ.*

ສປປ ລາວ ມີການພັດທະນາຢ່າງໄວວາໃນທົດສະວັດທີ່ຜ່ານມາ ເຊິ່ງມີລາຍຮັບຈາກ ຊັບພະຍາກອນທາງທຳມະຊາດ ທີ່ຂັບເຄື່ອນການຂະຫຍາຍຕົວທາງເສດຖະກິດ. ລັດຖະບານກຳລັງສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນທົ່ວປະເທດ ເພື່ອຮັບປະກັນວ່າ ການລົງທຶນທີ່ມີຄຸນນະພາບ ຈະສົ່ງຜົນດີຕໍ່ສັງຄົມລາວ, ຊຸກຍູ້ການພັດທະນາສີຂຽວ ແລະ ການນຳໃຊ້ຊັບພະຍາກອນທາງທຳມະຊາດໃນປະເທດຢ່າງມີຄວາມຍືນຍົງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດຄັ້ງທີ 8.

ລັດຖະບານໄດ້ປະກາດ “ປີທ່ອງທ່ຽວລາວ 2018” ເພື່ອເພີ່ມບົດບາດຂອງ ສປປ ລາວ ໃນການເປັນເປົ້າໝາຍປາຍທາງຂອງນັກທ່ອງທ່ຽວ. ເພື່ອເປັນການປະກອບສ່ວນໃສ່ຄວາມພະຍາຍາມນີ້, ແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມລະດົມແນວຄິດ ເພື່ອສົ່ງເສີມການລົງທຶນໃນຂະແໜງການທ່ອງທ່ຽວ ແລະ ຄວາມຮັບຜິດຊອບຕໍ່ສັງຂອງຜູ້ປະກອບການໃນຂະແໜງການການບໍລິການທ່ອງທ່ຽວ. ກອງປະຊຸມໄດ້ຖືກຈັດຂຶ້ນຢູ່ເມືອງຊົນນະບູລີ, ແຂວງສະຫວັນນະເຂດ ໂດຍອີງໃສ່ທ່າແຮງຂອງເຂດອະນຸລັກສັດປ່າໂອ່ງ-ມັ່ງ ຫຼື ແຫ່ງອື່ນໆ ທີ່ໃກ້ກັບນະຄອນໄກສອນ ພົມວິຫານ. ບັນດາຕາງໜ້າພາກເອກະຊົນ ແລະ ຜູ້ປະກອບການ ລວມໄປເຖິງຕາໜ້າຈາກແຂວງສະຫວັນນະເຂດ, ກະຊວງ ແລະ ກົມກອງທີ່ກ່ຽວຂ້ອງ ກໍໄດ້ເຂົ້າຮ່ວມປຶກສາຫາລືໃນກອງປະຊຸມຄັ້ງນີ້.

ໂດຍເຫັນໄດ້ເຖິງຄວາມສຳຄັນຂອງການລົງທຶນ ແລະ ການມີສ່ວນຮ່ວມກັບຊຸມຊົນຂອງພາກເອກະຊົນ ເພື່ອການພັດທະນາແບບຍືນຍົງ, ທ່ານ ທອນແກ້ວ ພຸດທະໄກຍະລາດ, ຮອງເຈົ້າແຂວງ ແຂວງສະຫວັນນະເຂດ ໄດ້ເນັ້ນໜັກເຖິງ “ຄວາມສຳຄັນຂອງການສ້າງຂີດຄວາມສາມາດຂອງຊຸມຊົນໃນເຂດຊົນນະບົດ ສຳລັບການພັດທະນາການທ່ອງທ່ຽວ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ເພື່ອບັນລຸການຄຸ້ມຄອງຊັບພະຍາກອນທາງທຳມະຊາດໃຫ້ມີຄວາມຍືນຍົງ”.

ທ່ານ ບາລາຊູບຣາມານຽມ ມູຣາລີ, ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ, ໄດ້ກ່າວມີຄວາມເຫັນເພີ່ມຕື່ມວ່າ “ການທ່ອງທ່ຽວອະນູລັກທຳມະຊາດ ມີທ່າແຮງສຳຄັນໃນການສົ່ງເສີມການຂະຫຍາຍຕົວຂອງເສດຖະກິດຂອງແຂວງ ລວມໄປເຖິງການປ່ຽນແປງຊີວິດການເປັນຢູ່ຂອງຫຼາຍຄົນໃນເຂດຊົນນະບົດ ຄືດັ່ງ ເມືອງຊົນນະບູລີ.

ການທ່ອງທ່ຽວແບບອະນຸລັກທໍາມະຊາດເຮັດໃຫ້ຊຸມຊົນໃນທ້ອງຖິ່ນມີແຫຼ່ງລາຍຮັບໃໝ່ ແລະ ໂອກາດສໍາລັບການພັດທະນາ. ນອກຈາກນີ້, ຍັງເປັນການກະຕຸ້ນໃຫ້ພາກເອກະຊົນດູແລເອົາໃຈໃສ່ຕໍ່ສິ່ງແວດລ້ອມຫຼາຍຂຶ້ນ ເນື່ອງຈາກວ່ານັກທ່ອງທ່ຽວຫຼາຍຄົນຕ້ອງການຈ່າຍເງິນເພີ່ມຂຶ້ນເພື່ອເຂົ້າທ່ຽວຊົມແຫຼ່ງດຶງດູດນັກທ່ອງທ່ຽວທີ່ຮັກສາ ແລະ ອະນຸລັກຄວາມຍືນຍົງ.

ກ່ອນໜ້າກອງປະຊຸມ, ຄະນະຜູ້ແທນກອງປະຊຸມໄດ້ໄປຢ້ຽມຢາມແຫຼ່ງທ່ອງທ່ຽວອະນຸລັກທໍາມະຊາດທີ່ບໍ່ໄກຈາກນະຄອນໄກສອນ ພົມມະວິຫານ ເຊັ່ນໄປຢ້ຽມຢາມ ອ່າງເກັບນໍ້ານໍ້າສຸຍ, ດົງລີງ ແລະ ເຂດອະນຸລັກສັດປ່າ ໂອ່ງ-ມັ່ງ. ຄະນະຜູ້ແທນໄດ້ພົບປະໂອ້ລົມກັບທີມອະນຸລັກທໍາມະຊາດຂອງບ້ານສະໜາມໄຊ ເຊິ່ງໄດ້ເນັ້ນໜັກຜົນສໍາເລັດ ແລະ ສິ່ງທ້າທາຍຂອງການອະນຸລັກທໍາມະຊາດ ເພື່ອການທ່ອງທ່ຽວ ໃນລະດັບຊຸມຊົນ. ເສັ້ນທາງການທ່ອງທ່ຽວແບບອະນຸລັກທໍາມະຊາດນີ້ ຈະໄດ້ຮັບການພັດທະນາ ແລະ ດຶງດູດນັກທ່ອງທ່ຽວທີ່ມາຢ້ຽມຢາມແຂວງສະຫວັນນະເຂດ ໂດຍການຮ່ວມມືກັບຜູ້ປະກອບການການທ່ອງທ່ຽວພາກເອກະຊົນ.

ກອງປະຊຸມຄັ້ງນີ້ ໄດ້ຖືກຈັດຂຶ້ນໂດຍພະແນກແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ ໂດຍການຮ່ວມມືກັບໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ຢູ່ໃນລະບົບນິເວດປ່າໂຄກທີ່ຢູ່ພາກໃຕ້ຂອງ ສປປ ລາວ ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດໂດຍກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້ ແລະ ໄດ້ຮັບການສະໜັບສະໜູນໂດຍອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ກອງທຶນສິ່ງແວດລ້ອມໂລກ.

**ສໍາລັບຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

*ທ່ານ ວະລີຍາ ສີຈັນທອງທິບ*
*ຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ*
*ອີເມວ: s_valiya@hotmail.com*
*Tel: +856 20 59693232*

*ທ່ານ ແກ້ວກໍລະກົດ ຈັນທະວີໄຊ*
*ຫົວໜ້າໂຄງການລະດັບຊາດ, ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງ ໃນລະບົບນິເວດປ່າໂຄກ ພາກໃຕ້ຂອງ ສປປ ລາວ*
*ກົມປ່າໄມ້, ກະຊວງກະສິກໍາ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ, ສປປ ລາວ*
ອີ-ເມວ: *keo.korakoth@hotmail.com*
*ໂທລະສັບ: +856 20 599 149 55*

*ທ່ານ ນາງ ດຣ. ມາກາເຣັດ ໂຈນສ ວິນລ່ຽມສ*
*ຫົວໜ້າໜ່ວຍງານຄຸ້ມຄອງຊັບພະຍາກອນທາງທໍາມະຊາດ ແລະ ການປ່ຽນແປງດິນຟ້າອາກາດ, ອົງການສະຫະປະຊາຊາດ ເພື່ອການພັດທະນາ*
*ອີ-ເມວ: margaret.jones.williams@undp.org*
*ໂທລະສັບ: +856 21 267 710*